ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ

ເລກທີ 4091 /ຫກ

ນະຄອນຫລວງວຽງຈັນ, ວັນທີ 23 ຕຸລາ 2026

ແຈ້ງການ

ເຖິງ: - ສາຂານິຕິບຸກຄົນຕ່າງປະເທດ ທີ່ເຄື່ອນໄຫວໃນໄລຍະຜ່ານມາ;
- ນິຕິບຸກຄົນຕ່າງປະເທດ ທີ່ມີຈຸດປະສົງເຄື່ອນ ຢູ່ ສປປ ລາວ;
- ເຈົ້າໜ້າທີ່ທະບຽນວິສາຫະກິດ ໃນຂອບເຂດທົ່ວປະເທດ.

ເລື່ອງ: ການເຄື່ອນໄຫວຂອງ ສາຂານິຕິບຸກຄົນຕ່າງປະເທດ ຢູ່ ສປປ ລາວ.

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ, ສະບັບເລກທີ 33/ສພຊ, ລົງວັນທີ 29 ທັນວາ 2022;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການ ສະບັບເລກທີ 1990/ອຄ, ລົງວັນທີ 09 ກັນຍາ 2025;
- ອີງຕາມ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດວຽກງານທະບຽນວິສາຫະກິດ ສະບັບເລກທີ 2406/ອຄ, ລົງວັນທີ 22 ທັນວາ 2023;
- ອີງຕາມ ໜັງສືສະເໜີຂອງກົມຄຸ້ມຄອງວິສາຫະກິດ ສະບັບເລກທີ 2324/ກຄວ, ລົງວັນທີ 20 ຕຸລາ 2026.

ຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດແຈ້ງມາຍັງທ່ານ ຊາບວ່າ ເພື່ອເຮັດໃຫ້ການເຄື່ອນໄຫວຂອງ ສາຂານິຕິບຸກຄົນຕ່າງປະເທດ ຢູ່ ສປປ ລາວ ຕາມວັກທີສອງ ຂໍ້ 1 ໂຮແມັ ງ VI ຂອງຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດວຽກງານທະບຽນວິສາຫະກິດ ສະບັບເລກທີ 2406/ອຄ, ລົງວັນທີ 22 ທັນວາ 2023 ໃຫ້ມີຄວາມສະດວກ, ຖືກຕ້ອງ ແລະ ສອດຄ່ອງ ກັບກົດໝາຍ ແລະ ລະບຽບການກ່ຽວຂ້ອງ. ດັ່ງນັ້ນ, ຈຶ່ງແຈ້ງມາຍັງທຸກພາກສ່ວນທີ່ກ່ຽວຂ້ອງ ໃຫ້ຈັດຕັ້ງປະຕິບັດ ດັ່ງນີ້:

1. ນິຕິບຸກຄົນ ທີ່ຂຶ້ນທະບຽນວິສາຫະກິດຕາມກົດໝາຍຕ່າງປະເທດ (ນິຕິບຸກຄົນຕ່າງປະເທດ) ທີ່ມີຈຸດປະສົງເຄື່ອນໄຫວສາຂາ ຢູ່ ສປປ ລາວ ແມ່ນສາມາດເຄື່ອນໄຫວໄດ້ສະເພາະ ສາຂາທະນາຄານທຸລະກິດຕ່າງປະເທດ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍທະນາຄານທຸລະກິດເທົ່ານັ້ນ ໂດຍບໍ່ຈຳເປັນຕ້ອງຂຶ້ນທະບຽນວິສາຫະກິດ. ຊຶ່ງນິຕິບຸກຄົນຕ່າງປະເທດດັ່ງກ່າວ ສາມາດຂໍອະນຸຍາດດຳເນີນທຸລະກິດ ນຳທະນາຄານແຫ່ງ ສປປ ລາວ ໄດ້ເລີຍ. ພາຍຫຼັງໄດ້ຮັບອະນຸຍາດແລ້ວ ສາມາດຂໍເລກປະຈຳຕົວຜູ້ເສຍອາກອນ ແລະ ຂໍຄວັດຕາປະທັບນຳຂະແໜງການກ່ຽວຂ້ອງ ຕາມກົດໝາຍ ແລະ ລະບຽບການ

ໃນກໍລະນີ ສາຂາທະນາຄານທຸລະກິດ ຕ້ອງການປ່ຽນແປງສະຖານະຂອງຕົນ ໂດຍຍົກລະດັບເປັນທະນາຄານທຸລະກິດ ຈຶ່ງໃຫ້ແຈ້ງຂຶ້ນທະບຽນວິສາຫະກິດ ຕາມກົດໝາຍວ່າດ້ວຍວິສາຫະກິດ.

2. ສໍາລັບສາຂານິຕິບຸກຄົນຕ່າງປະເທດ ທີ່ເຄື່ອນໄຫວໃນໄລຍະຜ່ານມາ (ທີ່ມີໃບທະບຽນວິສາຫະກິດ) ກ່ອນການຈັດຕັ້ງປະຕິບັດ ຄໍາແນະນໍາ ສະບັບເລກທີ 2406/ອຄ ແມ່ນໃຫ້ສືບຕໍ່ຈັດຕັ້ງປະຕິບັດ ໃນເວລາມີການປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ແມ່ນໃຫ້ປະຕິບັດ ຕາມແຕ່ລະກໍລະນີ ດັ່ງນີ້:

2.1. ກໍລະນີ ເປັນສາຂາທະນາຄານທຸລະກິດຕ່າງປະເທດ ແມ່ນໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ອອກແຈ້ງການລຶບລ້າງໃບທະບຽນວິສາຫະກິດເກົ່າ ແລະ ສາຂາທະນາຄານທຸລະກິດດັ່ງກ່າວ ສາມາດເຄື່ອນໄຫວທຸລະກິດ ຕາມໃບອະນຸຍາດດໍາເນີນທຸລະກິດ ຂອງທະນາຄານແຫ່ງ ສປປ ລາວ;

2.2. ກໍລະນີ ເປັນສາຂານິຕິບຸກຄົນຕ່າງປະເທດ ທີ່ດໍາເນີນທຸລະກິດກ່ຽວກັບ ການປະກັນໄພ, ທີ່ປຶກສາສາກົນ ແລະ ການບິນຕ່າງປະເທດ ຕ້ອງປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ຈາກສາຂານິຕິບຸກຄົນ ມາເປັນ ວິສາຫະກິດຮຸ້ນສ່ວນ ຫຼື ບໍລິສັດ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ ສະບັບປັບປຸງປີ 2022.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ຫົວໜ້າຫ້ອງການ

ປອ. ບົວວັນ ວິໄລວົງ